**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 58 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 08 / 07 / 22

# ມະຕິ
# ກອງປະຊຸມສະພາແຫ່ງຊາດ
# ວ່າດ້ວຍການຮັບຮອງເອົາບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າການຈັດຕັ້ງປະຕິບັດແຜນການປະຕິຮູບລັດວິສາຫະກິດ ໄລຍະຜ່ານມາ ແລະ ທິດທາງແຜນການຮອດທ້າຍປີ 2022

- ອີງຕາມ ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2015 ມາດຕາ 53 ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ປີ 2020 ມາດຕາ 33 ກ່ຽວກັບສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ;
- ອີງຕາມ ບົດລາຍງານຂອງລັດຖະບານ ສະບັບລົງວັນທີ 22 ມິຖຸນາ 2022 ກ່ຽວກັບຄວາມຄືບໜ້າ ແລະ ທິດທາງ ການປະຕິຮູບລັດວິສາຫະກິດ ໄລຍະຜ່ານມາ ແລະ ທິດທາງແຜນການປະຕິຮູບລັດວິສາຫະກິດ ແຕ່ນີ້ຫາທ້າຍປີ 2022.

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ການຄົ້ນຄວ້າປະກອບຄຳຄິດຄຳເຫັນຂອງ ກອງປະຊຸມສະພາແຫ່ງຊາດ ຢ່າງກ້ວາງຂວາງ ແລະ ເລິກເຊິ່ງຕໍ່ບົດລາຍງານຂອງ ລັດຖະບານ ໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ IX,

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານກ່ຽວກັບຄວາມຄືບໜ້າການປະຕິຮູບລັດວິສາຫະກິດໄລຍະຜ່ານມາ.**

ກອງປະຊຸມຮັບຮອງບົດລາຍງານຂອງລັດຖະບານ ກ່ຽວກັບຄວາມຄືບໜ້າການປະຕິຮູບລັດວິສາຫະກິດໄລຍະຜ່ານມາ ແລະ ສະແດງຄວາມຊົມເຊີຍ ລັດຖະບານ ທີ່ໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດແຜນການການປະຕິຮູບລັດວິສາຫະກິດໃນໄລຍະຜ່ານມາ, ຊຶ່ງໄດ້ຍົກໃຫ້ເຫັນຜົນສຳເລັດ, ຂໍ້ຄົງຄ້າງ ແລະ ບາງບົດຮຽນທີ່ຖອດຖອນໄດ້.

ການປະຕິຮູບລັດວິສາຫະກິດໄລຍະຜ່ານມາ ມີຜົນສຳເລັດທີ່ພົ້ນເດັ່ນ ດັ່ງນີ້:

1. ຈຳນວນຫົວໜ່ວຍລັດວິສາຫະກິດໃນປັດຈຸບັນມີທັງໝົດ 178 ຫົວໜ່ວຍ, ໃນນີ້: ຢູ່ສູນກາງ 96 ຫົວໜ່ວຍ ແລະ ຢູ່ທ້ອງຖິ່ນ 82 ຫົວໜ່ວຍ;
2. ໄດ້ກຳນົດທິດນຳ ແລະ ທິດທາງການປະຕິຮູບລັດວິສາຫະກິດ ຊຶ່ງປະກອບດ້ວຍ:

1) ທິດນຳ ແລະ ທິດທາງໃນການປັບໂຄງສ້າງລັດວິສາຫະກິດ ໂດຍສຸມໃສ່:

(1) ລັດວິສາຫະກິດທີ່ປະຕິບັດໜ້າທີ່ຍຸດທະສາດທາງດ້ານການເມືອງ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຊຶ່ງລັດຈະຮັກສາເປັນລັດວິສາຫະກິດທີ່ລັດຜູກຂາດ ຄືລັດຖືຮຸ້ນ 100% ແລະ ລັດວິສາຫະກິດທີ່ຫັນໄປສູ່ກຳມະສິດອື່ນຕາມຄວາມເໝາະສົມ;

(2) ສ້າງນິຕິກຳ ແລະ ກົນໄກການເຄື່ອນໄຫວ ຂອງລັດວິສາຫະກິດໃຫ້ເຄື່ອນໄຫວຕາມກົນໄກຕະຫຼາດ, ບໍລິການຈັດການທັນສະໄໝ, ໂປ່ງໃສ ແລະ ມີປະສິດທິຜົນ.

2) ການປະຕິຮູບລັດວິສາຫະກິດ ໄດ້ຈັດແບ່ງຕາມ 4 ປະເພດ ຄື:

(1) ລັດວິສາຫະກິດຍຸດທະສາດ ທີ່ລັດຕ້ອງຖືຮຸ້ນໄວ້ 100% ຫຼື ຮັກສາການຖືຮຸ້ນເປັນສ່ວນໃຫຍ່;

(2) ລັດວິສາຫະກິດທີ່ບໍ່ເປັນຍຸດທະສາດ ຊຶ່ງລັດບໍ່ຈຳເປັນສືບຕໍ່ຖືຮຸ້ນໃນອັດຕາສ່ວນໃຫຍ່;

(3) ລັດວິສາຫະກິດທີ່ເຄື່ອນໄຫວບໍ່ມີປະສິດທິຜົນ ຊຶ່ງຕ້ອງໄດ້ຫັນໄປສູ່ກຳມະສິດອື່ນ;

(4) ລັດວິສາຫະກິດທີ່ເຄື່ອນໄຫວບໍ່ມີປະສິດທິຜົນ ທີ່ຕ້ອງຍຸບເລີກ.

3. ການປະເມີນຜົນ ລັດວິສາຫະກິດລົງທຶນໄລຍະ 2016-2018 ຈຳນວນ 41 ຫົວໜ່ວຍ.

1) ຜົນການປະເມີນລວມ:

- ປະເພດ A (ທຸລະກິດທີ່ມີປະສິດທິຜົນ) ມີຈຳນວນ 12 ຫົວໜ່ວຍ;
- ປະເພດ B (ທຸລະກິດທີ່ມີປະສິດທິຜົນປານກາງ) ມີຈຳນວນ 17 ຫົວໜ່ວຍ;
- ປະເພດ C (ທຸລະກິດທີ່ບໍ່ມີປະສິດທິຜົນ) ມີຈຳນວນ 12 ຫົວໜ່ວຍ.

2) ປະເມີນຕາມປະເພດ ລັດວິສາຫະກິດ:

- ລັດວິສາຫະກິດ ທີ່ລັດຖືຮຸ້ນ 100%: ໂດຍລວມແລ້ວ ມີການດຳເນີນທຸລະກິດທີ່ອ່ອນແອ ແລະ ມີຄວາມສ່ຽງໃນຕໍ່ໜ້າ;
- ລັດວິສາຫະກິດປະສົມ ທີ່ລັດຖືຮຸ້ນນັບແຕ່ 50% ເຖິງ 99%: ໂດຍລວມແລ້ວການດຳເນີນທຸລະກິດຂອງລັດວິສາຫະກິດປະສົມ ເປັນທຸລະກິດທີ່ມີປະສິດທິຜົນສູງພໍສົມຄວນ;
- ບໍລິສັດປະສົມທີ່ລັດຖືຮຸ້ນ 49% ລົງມາ: ໂດຍລວມແລ້ວການດຳເນີນທຸລະກິດຂອງບໍລິສັດປະສົມ ເປັນທຸລະກິດທີ່ມີປະສິດທິຜົນດີ ແຕ່ລາຍຈ່າຍຂອງວິສາຫະກິດ ຍັງຕ້ອງໄດ້ມີການພິຈາລະນາ ແລະ ທົບທວນຄືນເພື່ອຮັບປະກັນປະສິດທິຜົນຂອງທຸລະກິດໃນໄລຍະຍາວ.

4. ການຈັດຕັ້ງປະຕິບັດແຜນການປະຕິຮູບລັດວິສາຫະກິດ ປີ 2022.

1) ດ້ານນິຕິກຳ:

- ລັດຖະບານ ໄດ້ອອກມະຕິວ່າດ້ວຍການຮັບຮອງແຜນຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບການປະຕິຮູບລັດວິສາຫະກິດ ໃນໄລຍະ 5 ປີ (2021-2025) ເຊິ່ງເປັນບ່ອນອີງໃນການຜັນຂະຫຍາຍນິຕິກຳຕ່າງໆໃນການປະຕິຮູບລັດວິສາຫະກິດ;
- ໄດ້ສຳເລັດຮ່າງດຳລັດວ່າດ້ວຍ ວິສາຫະກິດລັດລົງທຶນ ເຊິ່ງໄດ້ຜ່ານກອງປະຊຸມລັດຖະບານຮັບຮອງແລ້ວ ແລະ ຍັງຢູ່ໃນຂັ້ນຕອນການຮຽບຮຽງຄືນເພື່ອສະເໜີ ທ່ານນາຍົກລັດຖະມົນຕີ ອະນຸມັດຕາມລະບຽບການ;
- ໄດ້ດຳເນີນການຄົ້ນຄວ້າສ້າງຄູ່ມືການປະເມີນຜົນ ການດຳເນີນທຸລະກິດ, ການດຳເນີນງານຂອງສະພາບໍລິຫານ ແລະ ຄະນະອຳນວຍການວິສາຫະກິດລັດລົງທຶນ;
- ໄດ້ດຳເນີນການຄົ້ນຄວ້າຂໍ້ຕົກລົງ ວ່າດ້ວຍກຳນົດໝາຍເງິນເດືອນ, ເງິນອຸດໜູນ, ເງິນນະໂຍບາຍ ແລະ ລາຍຈ່າຍບໍລິຫານຂອງລັດວິສາຫະກິດ.

2) ຄວາມຄືບໜ້າການດຳເນີນການປະຕິຮູບລັດວິສາຫະກິດ:

(1) ໄດ້ດຳເນີນການປະຕິຮູບ 5 ລັດວິສາຫະກິດຍຸດທະສາດ ເປັນຕົ້ນ: 1) ລັດວິສາຫະກິດໄຟຟ້າລາວ, 2) ລັດວິສາຫະກິດນ້ຳມັນເຊື້ອໄຟລາວ, 3) ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, 4) ທະນາຄານພັດທະນາລາວ ແລະ 5) ທະນາຄານສົ່ງເສີມກະສິກຳ.

(1.1) ຄວາມຄືບໜ້າການປະຕິຮູບ: ລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟລາວ ແລະ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ;

ມາຮອດປັດຈຸບັນລັດຖະບານ ໄດ້ສຳເລັດການແຕ່ງຕັ້ງຄະນະປະຕິຮູບ ເພື່ອປ່ຽນແທນສະພາບໍລິຫານ ເພື່ອດຳເນີນຂັ້ນຕອນການປະຕິຮູບ 3 ລັດວິສາຫະກິດດັ່ງກ່າວ; ກຳລັງດຳເນີນການສະເໜີ ທ່ານນາຍົກລັດຖະມົນຕີ ແຕ່ງຕັ້ງຄະນະປະຕິຮູບລັດວິສາຫະກິດການບິນລາວ ແລະ ລັດວິສາຫະກິດພັດທະນາກະສິກຳ, ອຸດສາ ຫະກຳ ແລະ ບໍລິການຂາເຂົ້າ-ຂາອອກ.

(1.2) ຄວາມຄືບໜ້າການປະຕິຮູບ: ທະນາຄານພັດທະນາລາວ ແລະ ທະນາຄານສົ່ງເສີມກະສິກຳ.

ໄດ້ດຳເນີນການແກ້ໄຂ 2 ທະນາຄານທຸລະກິດລັດ ທີ່ຂາດທຶນຕໍ່ເນື່ອງດ້ວຍການຫັນໄປສູ່ຮູບການຮ່ວມທຶນກັບພາກເອກະຊົນພາຍໃນໂດຍລັດຂາຍຮຸ້ນອອກ 70%, ລັດຮັກສາໄວ້ 30%.

(2) ປະຕິຮູບລັດວິສາຫະກິດທີ່ຫຼຸບທຶນຕໍ່ເນື່ອງ ຈຳນວນ 3 ຫົວໜ່ວຍ ຄື:

- ລັດວິສາຫະກິດ ໄປສະນີລາວ: ຂາຍຮຸ້ນອອກ ຈຳນວນ 51%;
- ລັດວິສາຫະກິດ ບໍລິການສິນຄ້າຜ່ານແດນ (ລລບສ): ພວມດຳເນີນການຂາຍຮຸ້ນ ຈຳນວນ 49%;
- ບໍລິສັດ ເອັມເອສໄອຈີ ປະກັນໄພລາວຈຳກັດ (MSIG): ພວມດຳເນີນການຂາຍຮຸ້ນ ຈຳນວນ 49%.

ການປະຕິຮູບລັດວິສາຫະກິດດ້ວຍການຂາຍຮຸ້ນ ຂອງບັນດາລັດວິສາຫະກິດຂ້າງເທິງ ໄດ້ລາຍຮັບເຂົ້າງົບປະມານລັດ ທັງໝົດຈຳນວນ 1.037,1 ຕື້ກີບ.

**ມາດຕາ 2 ຮັບຮອງທິດທາງແຜນການປະຕິຮູບລັດວິສາຫະ ກິດ ຮອດທ້າຍປີ 2022**

ກອງປະຊຸມ ຮັບຮອງເອົາ 5 ທິດທາງການປະຕິຮູບລັດວິສາຫະກິດ ຕາມການລາຍງານຂອງລັດຖະບານ ດັ່ງນີ້:

1. ສືບຕໍ່ແຕ່ງຕັ້ງຄະນະປະຕິຮູບລັດວິສາຫະກິດ ການບິນລາວ ແລະ ລັດວິສາຫະກິດພັດທະນາກະສິກຳ, ອຸດສາຫະກຳ ແລະ ບໍລິການ ຂາອອກ-ຂາເຂົ້າ;
2. ດຳເນີນການປະຕິຮູບຕາມແຜນ ຄະນະປະຕິຮູບລັດວິສາຫະກິດໄຟຟ້າລາວ, ລັດວິສາຫະກິດນ້ຳມັນເຊື້ອໄຟ ລາວ ແລະ ບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ ໃຫ້ສາມາດແກ້ໄຂບັນຫາພື້ນຖານທາງ ດ້ານປັບປຸງ ໂຄງສ້າງດ້ານທຸລະກິດຂອງບໍລິສັດ, ປັບປຸງໂຄງສ້າງດ້ານການເງິນຊັບສິນ-ໜີ້ສິນ, ປັບປຸງຜູ້ບໍລິຫານ, ປັບປຸງໂຄງສ້າງ ບຸກຄະລາກອນ ໄປຕາມທິດສັນຍາແຮງງານ;
3. ເລັ່ງລັດສຳເລັດບັນດານິຕິກຳທີ່ກຳນົດໄວ້ໃນ ມາດຕາ 1 ຂໍ້ 4 ຂອງມະຕິສະບັບນີ້ ເພື່ອເປັນບ່ອນອີງ ໃນການ ປະຕິຮູບບັນດາລັດວິສາຫະກິດອື່ນທີ່ຍັງເຫຼືອ ໄປຕາມແຜນການປະຕິຮູບວິສາຫະກິດລັດລົງທຶນ ໄລຍະ 5 ປີ (2021-2025);
4. ຄົ້ນຄວ້າອອກນິຕິກຳ ເພື່ອໃຫ້ລັດວິສາຫະກິດສາມາດເຂົ້າຫາແຫຼ່ງທຶນຈາກສະຖາບັນການເງິນ ດ້ວຍການນຳໃຊ້ຊັບສິນທີ່ລັດປະກອບໃຫ້ ເພື່ອເປັນຫຼັກຊັບຄ້ຳປະກັນ;
5. ກະຊວງການເງິນ ຮ່ວມມືກັບ 4 ບໍລິສັດຫຼັກຊັບ ເພື່ອສ້າງຄວາມເຂັ້ມແຂງໃຫ້ບັນດາລັດວິສາຫະກິດທີ່ມີ ເງື່ອນໄຂໄດ້ສາມາດກ້າວໄປສູ່ການຫັນເປັນບໍລິສັດ ມະຫາຊົນ ເພື່ອລະດົມທຶນຜ່ານຕະຫຼາດຫຼັກຊັບ.

**ມາດຕາ 3 ມາດຕະການຈັດຕັ້ງປະຕິບັດ**

ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດທິດທາງແຜນການປະຕິຮູບຮອດທ້າຍປີ 2022 ມີຜົນສຳເລັດຕາມແຜນການ, ກອງປະຊຸມສະເໜີໃຫ້ລັດຖະບານເອົາໃຈໃສ່ປະຕິບັດມາດຕະການເພີ່ມເຕີມ ດັ່ງນີ້:

1. ຮີບຮ້ອນປັບປຸງແກ້ໄຂ ດ້ານອ່ອນ ແລະ ບັນຫາຄົງຄ້າງ ຄື:

- ຂັ້ນມະຫາພາກ: ຄົ້ນຄວ້ານະໂຍບາຍກ່ຽວກັບ ການແບ່ງຂັ້ນຄຸ້ມຄອງຂອງລັດວິສາຫະກິດ, ບັນດານິ ຕິກຳກ່ຽວຂ້ອງກ່ຽວກັບການປະຕິຮູບ, ການພັດທະນາ, ການຄຸ້ມຄອງ ແລະ ການຕິດຕາມກວດກາໃຫ້ຈະແຈ້ງ ເປັນຕົ້ນ ກ່ຽວກັບການຄຸ້ມຄອງຊັບສິນຂອງລັດ, ການຫັນຊັບສິນເປັນທຶນ, ການປະມູນ ແລະ ການ ຫັນໄປສູ່ກຳມະສິດອື່ນໃຫ້ສອດຄ່ອງ ກັບກົດໝາຍວ່າດ້ວຍຊັບສິນຂອງລັດ, ການເຄື່ອນໄຫວທຸລະ ກິດຂອງລັດ ວິສາຫະກິດກໍລະນີໃດຕາມກົນໄກ ຕະຫຼາດ, ກໍລະນີໃດມີການຜູກຂາດ, ການເຄື່ອນໄຫວແບບເກື້ອກູນ, ນະໂຍບາຍເງິນເດືອນຂອງພະນັກງານ, ນະ ໂຍບາຍພາສີ-ອາກອນ ພ້ອມທັງໂຄສະນາເຜີຍແຜ່ ໃຫ້ພາກສ່ວນກ່ຽວຂ້ອງ ແລະ ສັງຄົມຮັບຮູ້;
- ຂັ້ນວິສາຫະກິດ: ເອົາໃຈໃສ່ແກ້ໄຂບັນຫາບຸກຄະລາກອນຕິດພັນກັບຄຸນທາດການເມືອງ, ຄຸນສົມບັດ, ຈັນຍາບັນ, ຈັນຍາທຳ ແລະ ຄວາມຮູ້ ຄວາມສາມາດໃນການບໍລິຫານຈັດການຂອງຄະນະອຳນວຍການ, ພະນັກງານບໍລິຫານ ແລະ ພະນັກງານວິຊາ ການສະເພາະໃຫ້ມີຄຸນນະພາບ ແລະ ປະສິດທິພາບ;

2. ຮີບຮ້ອນຈັດຕັ້ງປະຕິບັດບັນດານິຕິກຳກ່ຽວຂ້ອງທີ່ມີແລ້ວໃຫ້ມີຜົນສັກສິດ ແລະ ແຜນການປະ ຕິຮູບລັດວິສາຫະກິດທີ່ມີ ແລ້ວໃຫ້ເປັນແຜນລະອຽດເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດໃຫ້ໄປຕາມແຜນ ແລະ ມີປະສິດທິຜົນຕົວຈິງ;
3. ຮີບຮ້ອນແກ້ໄຂ ແລະ ເກັບກູ້ຄືນຊັບສິນ ທີ່ພະນັກງານຍັກຍອກເງິນທະນາຄານສົ່ງເສີມກະສິກຳ ຈຳນວນທັງໝົດ 308 ຄົນ ມູນຄ່າ 260,46 ຕື້ກີບ ຕາມຜົນການກວດສອບ ໃຫ້ໄປຕາມຂະບວນຍຸຕິທຳຢ່າງເຂັ້ມງວດໃຫ້ສຳເລັດໂດຍໄວ;
4. ຄົ້ນຄວ້າການກຳນົດຄາດໝາຍສູ້ຊົນແຜນການການປະຕິ ຮູບລັດວິສາຫະກິດ ຮອດທ້າຍປີ 2022 ໃຫ້ຊັດເຈນ, ສ້າງບັນຊີລັດວິສາຫະກິດ ໃນທົ່ວປະເທດໃຫ້ລະອຽດໂດຍຈັດຕາມ 4 ປະເພດ ລັດວິສາຫະກິດ, ລວມທັງບັນຊີ ສັງລວມຊັບສິນ, ໜີ້ສິນ ແລະ ໜີ້ຕ້ອງຮັບຂອງແຕ່ລະວິສາຫະກິດໃຫ້ຊັດເຈນ ແລະ ຄົບຖ້ວນ ເພື່ອເປັນບ່ອນ ອີງໃນ ການຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາ, ພ້ອມກັນນັ້ນໃຫ້ກະກຽມລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;
5. ຄົ້ນຄວ້າສ້າງແຜນຍຸດທະສາດການພັດທະນາລັດວິສາຫະກິດສຳລັບໄລຍະກາງ ແລະ ໄລຍະຍາວພ້ອມທັງກຳນົດວິໄສທັດພັດທະນາລັດວິສາຫະກິດໃຫ້ຈະແຈ້ງ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ ລັດຖະບານຊີ້ນຳບັນດາກະຊວງ, ອົງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນຈັດຕັ້ງປະຕິບັດມະຕິສະບັບນີ້ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການແຜນການ, ການເງິນ ແລະ ການກວດສອບ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ດຳເນີນການຕິດຕາມ-ກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ຕາມພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**